ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 38 ສປປ

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສັນຊາດລາວ**
**ສະບັບປັບປຸງ .**

~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ໝວດທີ VI, ມາດຕາ 67, ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍ ທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;

- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 05 / ສພຊ, ລົງວັນທີ 17 ພຶດສະພາ 2004 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ສັນຊາດລາວ ສະບັບປັບປຸງ;

- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 17/ຄປຈ ລົງວັນທີ 25 ພຶດສະພາ 2004.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ສັນຊາດລາວ ສະບັບປັບປຸງ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 15 ມິຖຸນາ 2004.

ປະທານປະເທດ ແຫ່ງ ສປປລາວ

ຄຳໄຕ ສີພັນດອນ.
~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 05 /ສພຊ

# ມະຕິຕົກລົງ
ຂອງ
ສະພາແຫ່ງຊາດ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍສັນຊາດລາວ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ V ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ສັນຊາດລາວ ສະບັບປັບປຸງ ໃນວາລະປະຊຸມຕອນເຊົ້າຂອງວັນທີ 17 ພຶດສະພາ 2004;

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u>. ຮັບຮອງເອົາກົດໝາຍວ່າດ້ວຍ ສັນຊາດລາວ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 17 ພຶດສະພາ 2004

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 05 /ສພຊ
ນະຄອນຫລວງວຽງຈັນ, ວັນທີ 17 ພຶດສະພາ 2004

# ກົດໝາຍ
# ວ່າດ້ວຍສັນຊາດລາວ

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍວ່າດ້ວຍສັນຊາດລາວ ກໍານົດຫລັກການ, ລະບຽບການ ກ່ຽວກັບການໄດ້, ການເສຍສັນຊາດລາວ ເພື່ອເຮັດໃຫ້ການຄຸ້ມຄອງ ແລະການກວດກາພົນລະເມືອງ ມີປະສິດທິພາບ, ເຂົ້າສູ່ລະບຽບກົດໝາຍ, ຍົກສູງກຽດສັກສີ ແລະຄວາມຮັບຜິດຊອບຂອງພົນລະເມືອງລາວຕໍ່ປະເທດຊາດ, ສຶກສາອົບຮົມ, ຂະຫຍາຍມູນເຊື້ອຄວາມສາມັກຄີ, ນໍ້າໃຈຮັກຊາດຂອງພົນລະເມືອງລາວ, ວັດທະນະທໍາອັນດີງາມຂອງຊາດ, ເພີ້ມທະວີສາຍກ່ຽວພັນສະໜິດແໜ້ນ ລະຫ່ວາງລັດ ສປປ ລາວ ກັບພົນລະເມືອງລາວ.

### ມາດຕາ 2 ສັນຊາດລາວ

ສັນຊາດລາວ ແມ່ນສາຍກ່ຽວພັນສະໜິດແໜ້ນ ທາງດ້ານການເມືອງ ແລະກົດໝາຍ ລະຫວ່າງບຸກຄົນ ກັບລັດ ສປປ ລາວ ຊຶ່ງສະແດງອອກເຖິງ ສິດ ແລະພັນທະຂອງພົນລະເມືອງລາວ ຕໍ່ລັດ ສປປ ລາວ, ສິດ ແລະຄວາມຮັບຜິດຊອບຂອງລັດ ສປປ ລາວ ຕໍ່ ພົນລະເມືອງລາວ.

ຜູ້ທີ່ມີສັນຊາດລາວ ຖືວ່າແມ່ນພົນລະເມືອງລາວ.

### ມາດຕາ 3 ການໃຫ້ມີສັນຊາດດຽວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ອະນຸຍາດໃຫ້ພົນລະເມືອງລາວ ມີຫລາຍສັນຊາດຄວບກັນ.

**ມາດຕາ 4 ການຮັກສາສັນຊາດລາວ**

ການແຕ່ງດອງ, ການຢ່າຮ້າງຂອງພົນລະເມືອງລາວ ກັບບຸກຄົນທີ່ມີສັນຊາດອື່ນ ຫລື ກັບບຸກຄົນທີ່ບໍ່ມີສັນຊາດນັ້ນ ຈະບໍ່ພາໃຫ້ມີການປ່ຽນແປງສັນຊາດລາວ.

ການໄດ້ ຫລືການເສຍສັນຊາດລາວຂອງຜົວ ຫລືເມຍ ຈະບໍ່ພາໃຫ້ສັນຊາດຂອງອີກຝ່າຍໜຶ່ງ ມີການປ່ຽນແປງ.

**ມາດຕາ 5 ການປົກປ້ອງພົນລະເມືອງ ລາວ ທີ່ຢູ່ຕ່າງປະເທດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄຸ້ມຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ ທີ່ອາໄສຢູ່ຕ່າງປະເທດ.

**ມາດຕາ 6 ການຫ້າມມອບໂອນພົນລະເມືອງລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະບໍ່ມອບໂອນພົນລະເມືອງລາວໃຫ້ແກ່ລັດຕ່າງປະເທດ.

**ມາດຕາ 7 ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ**

ຄົນຕ່າງປະເທດ ແມ່ນຄົນທີ່ມີສັນຊາດອື່ນ ຊຶ່ງເຂົ້າມາ ສປປ ລາວ ຊົ່ວຄາວ ຫລືຍາວນານ ເພື່ອປະຕິບັດໜ້າທີ່ໃດໜຶ່ງ, ເມື່ອໝົດກຳນົດແລ້ວກໍກັບຄືນ. ບຸກຄົນເຫຼົ່ານີ້ ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງການຕ່າງປະເທດ ແລະພາກສ່ວນອື່ນໆທີ່ ກ່ຽວຂ້ອງ.

ຄົນຕ່າງດ້າວ ແມ່ນຄົນທີ່ມີສັນຊາດອື່ນ ແຕ່ເຂົ້າມາຕັ້ງຖິ່ນຖານ, ອາໄສຢູ່ໃນ ສປປ ລາວ ຍາວນານ, ຖືບັດຕ່າງດ້າວ ແລະລັດຖະບານຂອງຄົນຕ່າງດ້າວນັ້ນ ກໍຍັງຮັບຮູ້ຢ່າງເປັນທາງການຢູ່.

ຄົນບໍ່ມີສັນຊາດ ແມ່ນບຸກຄົນທີ່ອາໄສຢູ່ໃນດິນແດນຂອງ ສປປ ລາວ ຊຶ່ງບໍ່ແມ່ນພົນລະເມືອງລາວ ແລະບໍ່ສາມາດຢັ້ງຢືນວ່າ ຕົນມີສັນຊາດໃດ.

ຄົນຕ່າງດ້າວ ແລະຄົນບໍ່ມີສັນຊາດ ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງປ້ອງກັນຄວາມສະຫງົບ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ.

ພົນລະເມືອງຕ່າງປະເທດຕາມກົດໝາຍສະບັບນີ້ ປະກອບດ້ວຍ ຄົນຕ່າງປະເທດ ແລະຄົນຕ່າງດ້າວ.

**ມາດຕາ 8 ສິດໃນການຂໍເອົາສັນຊາດອື່ນ**

ພົນລະເມືອງລາວ ມີສິດຂໍເອົາສັນຊາດອື່ນ ແຕ່ຕ້ອງໄດ້ປະສັນຊາດລາວເສຍກ່ອນ; ການປະສັນຊາດລາວ ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ການໄດ້ສັນຊາດລາວ

**ມາດຕາ 9 ພື້ນຖານການໄດ້ສັນຊາດລາວ**

ສັນຊາດລາວ ຈະໄດ້ມາຈາກ:

1. ການເກີດ;
2. ການຮັບເຂົ້າສັນຊາດລາວ;
3. ການໄດ້ສັນຊາດລາວຄືນ;
4. ພື້ນຖານອື່ນໆ ທີ່ໄດ້ກຳນົດໄວ້ໃນມາດຕາ 11 ຫາມາດຕາ 14 ຂອງກົດໝາຍສະບັບນີ້.

**ມາດຕາ 10 ສັນຊາດຂອງເດັກ ຊຶ່ງພໍ່ ແລະແມ່ ເປັນພົນລະເມືອງລາວ**

ເດັກ ຊຶ່ງໃນເວລາເກີດນັ້ນ ພໍ່ ແລະແມ່ ເປັນພົນລະເມືອງລາວ ກໍຖືວ່າເປັນພົນລະເມືອງລາວ ໂດຍບໍ່ຂຶ້ນກັບວ່າເດັກນັ້ນເກີດຢູ່ໃນ ຫລືນອກດິນແດນຂອງ ສປປ ລາວ.

**ມາດຕາ 11 ສັນຊາດຂອງເດັກ ຊຶ່ງພໍ່ ຫລືແມ່ ເປັນພົນລະເມືອງລາວ**

ໃນເມື່ອ ພໍ່ ຫລືແມ່ຂອງເດັກ ເປັນພົນລະເມືອງລາວ ໃນເວລາເດັກເກີດ ຈະຖືວ່າເດັກຜູ້ນັ້ນ ເປັນພົນລະເມືອງລາວ ຖ້າຫາກວ່າ :

1. ເດັກຜູ້ນັ້ນ ໄດ້ເກີດຢູ່ໃນດິນແດນຂອງ ສປປ ລາວ;
2. ເດັກຜູ້ນັ້ນ ໄດ້ເກີດຢູ່ນອກດິນແດນຂອງ ສປປ ລາວ ໃນເວລານັ້ນ ພໍ່ແມ່ ທັງສອງ ຫລືພໍ່ແມ່ຜູ້ໃດຜູ້ໜຶ່ງ ມີທີ່ຢູ່ຖາວອນໃນດິນແດນຂອງ ສປປ ລາວ.

ໃນກໍລະນີທີ່ເດັກຜູ້ນັ້ນ ໄດ້ເກີດຢູ່ນອກດິນແດນຂອງ ສປປ ລາວ ແລະພໍ່ແມ່ທັງສອງມີທີ່ຢູ່ຖາວອນ ຢູ່ນອກດິນແດນຂອງ ສປປ ລາວ ສັນຊາດຂອງເດັກ ໃຫ້ຖືເອົາຕາມຄຳເຫັນດີຂອງພໍ່ແມ່.

ໃນກໍລະນີ ທີ່ພໍ່ ຫລືແມ່ ຂອງເດັກເປັນພົນລະເມືອງລາວ ແລະອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ເດັກທີ່ເກີດມານັ້ນ ຖືວ່າເປັນພົນລະເມືອງລາວ ໂດຍບໍ່ຂຶ້ນກັບບ່ອນເກີດ.

**ມາດຕາ 12 ສັນຊາດຂອງເດັກ ຊຶ່ງພໍ່ ແລະແມ່ ເປັນຄົນບໍ່ມີສັນຊາດ**

ເດັກທີ່ໄດ້ເກີດຢູ່ໃນດິນແດນຂອງ ສປປ ລາວ ຊຶ່ງພໍ່ ແລະແມ່ ເປັນຄົນບໍ່ມີສັນຊາດ, ມີທີ່ຢູ່ຖາວອນໃນ ສປປ ລາວ, ໄດ້ເຊື່ອມເຂົ້າສັງຄົມ ແລະວັດທະນະທຳລາວແລ້ວ ກໍຈະໄດ້ສັນຊາດລາວ ຕາມການຮ້ອງຂໍຂອງພໍ່ແມ່.

**ມາດຕາ 13 ສັນຊາດຂອງເດັກທີ່ບໍ່ຮູ້ວ່າຜູ້ໃດເປັນພໍ່ ແລະແມ່**

ເດັກທີ່ໄດ້ພົບເຫັນຢູ່ໃນດິນແດນຂອງ ສປປ ລາວ ແລະບໍ່ຮູ້ວ່າ ຜູ້ໃດເປັນພໍ່ ແລະ ແມ່ນັ້ນ ກໍຈະຖືວ່າເປັນພົນລະເມືອງລາວ.

ຖ້າວ່າເດັກທີ່ພົບເຫັນນັ້ນ ຍັງບໍ່ທັນເຖິງອາຍຸສິບແປດປີ ຫາກມີຫລັກຖານວ່າ ພໍ່ ແລະແມ່ຂອງເດັກເປັນພົນລະເມືອງຕ່າງປະເທດ ກໍຈະຖືວ່າ ເດັກຜູ້ນັ້ນເປັນພົນລະເມືອງຕ່າງປະເທດນັບແຕ່ມື້ເກີດເປັນຕົ້ນໄປ.

**ມາດຕາ 14 ເງື່ອນໄຂການໄດ້ສັນຊາດລາວຂອງພົນລະເມືອງຕ່າງປະເທດ ຫລືຄົນບໍ່ມີສັນຊາດ**

ພົນລະເມືອງຕ່າງປະເທດ ຫລືຄົນບໍ່ມີສັນຊາດ ອາດຈະໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງຜູ້ກ່ຽວ ຖ້າຫາກວ່າມີເງື່ອນໄຂຄົບຖ້ວນດັ່ງນີ້:

1. ມີອາຍຸ ແຕ່ສິບແປດປີຂຶ້ນໄປ ໃນເວລາເຮັດຄຳຮ້ອງຂໍເອົາສັນຊາດລາວ;
2. ເຄົາລົບລັດຖະທຳມະນູນ ແລະກົດໝາຍຂອງ ສປປ ລາວ;
3. ຮູ້ເວົ້າ, ອ່ານ ແລະຂຽນພາສາລາວໄດ້ໃນລະດັບອັນແນ່ນອນ;
4. ມີຫລັກຖານວ່າຕົນໄດ້ເຊື່ອມເຂົ້າສັງຄົມ ແລະວັດທະນະທຳລາວ, ຮູ້ ແລະເຄົາລົບຮີດຄອງປະເພນີອັນດີງາມຂອງລາວ;
5. ມີສຸຂະພາບດີ, ບໍ່ເປັນພະຍາດຕິດແປດທີ່ຮ້າຍແຮງ, ບໍ່ຕິດຢາເສບຕິດ;
6. ບໍ່ໄດ້ຖືກສານຕັດສິນລົງໂທດຕັດອິດສະລະພາບ;
7. ໄດ້ປະກອບສ່ວນໃນການປົກປັກຮັກສາ ແລະພັດທະນາປະເທດຊາດ;
8. ບໍ່ໄດ້ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງຊາດ;
9. ໄດ້ປະສັນຊາດເດີມຂອງຕົນ (ຍົກເວັ້ນຄົນບໍ່ມີສັນຊາດ);
10. ໄດ້ຢູ່ ສປປ ລາວ ຢ່າງຕໍ່ເນື່ອງ ແຕ່ສິບປີຂຶ້ນໄປ ກ່ອນເວລາເຮັດຄຳຮ້ອງຂໍເອົາສັນຊາດລາວ; ສຳລັບຜູ້ມີຄວາມຮູ້ດ້ານວິຊາສະເພາະຂັ້ນຊ່ຽວຊານ ກຳນົດເວລາ ດັ່ງກ່າວນີ້ ອາດຈະສັ້ນກວ່າ;
11. ມີວິຊາສະເພາະ, ວິຊາຊີບ ໃດໜຶ່ງທີ່ແນ່ນອນ, ມີຖານະດ້ານເສດຖະກິດທີ່ໝັ້ນຄົງ.

**ມາດຕາ 15 ການຮັບຜູ້ທີ່ມີເຊື້ອຊາດລາວເຂົ້າສັນຊາດລາວ**

ຜູ້ທີ່ມີເຊື້ອຊາດລາວ ອາດຈະໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງຜູ້ກ່ຽວຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນມາດຕາ14 ຂອງກົດໝາຍສະບັບນີ້ ຍົກເວັ້ນ ຂໍ້ 9.

ກຳນົດເວລາຢູ່ ສປປ ລາວນີ້ ແມ່ນຫ້າປີຂຶ້ນໄປ ສຳລັບຜູ້ທີ່ໄດ້ສັນຊາດອື່ນແລ້ວ ແລະ ສາມປີຂຶ້ນໄປ ສຳລັບຜູ້ທີ່ບໍ່ໄດ້ສັນຊາດອື່ນ.

**ມາດຕາ 16 ການຍື່ນຄຳຮ້ອງ ກ່ຽວກັບສັນຊາດລາວ**

ຄຳຮ້ອງຂໍເອົາ, ຄຳຮ້ອງຂໍປະ ແລະຄຳຮ້ອງຂໍເອົາສັນຊາດລາວຄືນຂອງຜູ້ຢູ່ພາຍໃນ ສປປລາວ ຕ້ອງຍື່ນຕໍ່ກະຊວງຍຸຕິທຳ ໂດຍຜ່ານຂັ້ນຕອນດັ່ງນີ້:

1. ອົງການປົກຄອງບ້ານ;
2. ອົງການປົກຄອງເມືອງ, ເທດສະບານ;
3. ອົງການປົກຄອງແຂວງ, ນະຄອນ;
4. ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ເພື່ອກວດກາ;
5. ກະຊວງປ້ອງກັນຄວາມສະຫງົບ.

ການຮ້ອງຂໍ ກ່ຽວກັບສັນຊາດລາວຢູ່ກະຊວງຍຸຕິທຳ ແລະອົງການອື່ນໆ ທີ່ໄດ້ກ່າວມາຂ້າງເທິງນີ້ ຜູ້ຮ້ອງຂໍຕ້ອງມາຍື່ນສຳນວນຄຳຮ້ອງດ້ວຍຕົນເອງ ເພື່ອທົດສອບ ຄວາມເປັນຈິງໃຫ້ຖືກຕ້ອງກັບເອກະສານເຊັ່ນ: ຊີວະປະວັດ, ການເວົ້າ, ການອ່ານ, ການຂຽນພາສາລາວ, ການເຊື່ອມເຂົ້າສັງຄົມ ແລະວັດທະນະທຳລາວ ແລະອື່ນໆ ຕາມເງື່ອນ ໄຂທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້.

ສຳລັບຄົນລາວທີ່ອາໄສຢູ່ຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍປະສັນຊາດລາວ ຕໍ່ກະຊວງຍຸຕິທຳ ໂດຍຜ່ານຂັ້ນຕອນດັ່ງນີ້:

1. ສະຖານທູດ ຫລືກົງສູນ ສປປລາວ ປະຈຳປະເທດນັ້ນ;
2. ກະຊວງການຕ່າງປະເທດ;
3. ກະຊວງປ້ອງກັນຄວາມສະຫງົບ.

ໃນກໍລະນີທີ່ບໍ່ມີສະຖານທູດ ຫລືກົງສູນ ສປປ ລາວ ຢູ່ປະເທດນັ້ນ ໃຫ້ຍື່ນຄຳຮ້ອງຜ່ານກະຊວງການຕ່າງປະເທດຂອງ ສປປລາວ.

ພາຍຫລັງໄດ້ຮັບສຳນວນຄຳຮ້ອງແລ້ວ ກະຊວງຍຸຕິທຳ ຕ້ອງກວດກາເບິ່ງສຳນວນຄຳຮ້ອງດັ່ງກ່າວ, ຖ້າຫາກເຫັນວ່າມີບັນຫາໃດໜຶ່ງຍັງບໍ່ຈະແຈ້ງ ກໍມີສິດສອບຖາມຄືນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ. ເມື່ອເຫັນວ່າຖືກຕ້ອງແລ້ວ ຈຶ່ງສະເໜີຕໍ່ລັດຖະບານ ເພື່ອນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ.

## ໝວດທີ 3
## ການເສຍສັນຊາດລາວ ແລະການໄດ້ສັນຊາດລາວຄືນ

### ມາດຕາ 17 ສາເຫດທີ່ພາໃຫ້ ເສຍສັນຊາດລາວ

ສັນຊາດລາວຈະເສຍໄປໃນກໍລະນີ:

1. ປະສັນຊາດລາວ;
2. ຖືກຖອນສັນຊາດລາວຄືນ;
3. ໄປຢູ່ຕ່າງປະເທດ.

ການເສຍສັນຊາດຈະບໍ່ພາໃຫ້ສັນຊາດຂອງຜົວ ຫລືເມຍ ແລະລູກ ມີການປ່ຽນແປງ.

### ມາດຕາ 18 ການປະສັນຊາດລາວ

ພົນລະເມືອງລາວອາດຈະປະສັນຊາດລາວໄດ້ ໂດຍໄດ້ຮັບອະນຸຍາດຈາກຄະນະປະຈຳສະພາແຫ່ງຊາດ ແຫ່ງ ສປປ ລາວ.

ການປະສັນຊາດລາວ ຈະບໍ່ອະນຸຍາດ ໃນກໍລະນີດັ່ງນີ້:

1. ຜູ້ຂໍປະສັນຊາດ ຍັງບໍ່ທັນໄດ້ປະຕິບັດພັນທະພົນລະເມືອງລາວ ຂອງຕົນຢ່າງຄົບຖ້ວນຕໍ່ອົງການຈັດຕັ້ງຂອງລັດ ຫລືສັງຄົມເຊັ່ນ: ການເສຍພາສີອາກອນ ຫລືພັນທະອື່ນໆ;
2. ຜູ້ຂໍປະສັນຊາດ ເປັນຜູ້ຖືກຫາ, ຈຳເລີຍ ຫລືຖືກສານຕັດສິນລົງໂທດ ຊຶ່ງຈະໄດ້ປະຕິບັດຄຳຕັດສິນນັ້ນ;
3. ຖ້າວ່າການປະສັນຊາດລາວ ຫາກຂັດກັບຜົນປະໂຫຍດ ຫລືຄວາມປອດໄພຂອງ ສປປ ລາວ.

### ມາດຕາ 19 ການຖອນສັນຊາດລາວຄືນ

ບຸກຄົນທີ່ໄດ້ສັນຊາດລາວໄປແລ້ວ ອາດຈະຖືກຖອນຄືນພາຍໃນກຳນົດຫ້າປີ ນັບແຕ່ວັນໄດ້ຮັບສັນຊາດລາວເປັນຕົ້ນໄປ ຕາມການສະເໜີຂອງລັດຖະບານ ຖ້າເຫັນວ່າມີການກະທຳດັ່ງນີ້:

1. ໄດ້ສັນຊາດລາວມາໂດຍບໍ່ມີພື້ນຖານຖືກຕ້ອງຕາມກົດໝາຍ;
2. ປະພຶດຕົນບໍ່ສົມກຽດສັກສີຂອງພົນລະເມືອງລາວ ເຊັ່ນ: ໄດ້ທໍລະຍົດຕໍ່ຊາດ, ໄດ້ກໍ່ຄວາມເສຍຫາຍຕໍ່ປະເທດຊາດ.

ການຖອນສັນຊາດລາວຄືນຈະບໍ່ພາໃຫ້ສັນຊາດຂອງຜົວ ຫຼືເມຍ ແລະລູກຂອງຜູ້ກ່ຽວມີການປ່ຽນແປງ.

### ມາດຕາ 20 ການໄປຢູ່ຕ່າງປະເທດ

ບຸກຄົນໃດ ທີ່ໄປຢູ່ຕ່າງປະເທດເກີນເຈັດປີ ໂດຍບໍ່ໄດ້ຮັບອະນຸຍາດ ຫລືໄປຢູ່ຕ່າງປະເທດ ໂດຍໄດ້ຮັບອະນຸຍາດ ແຕ່ຫາກເກີນກຳນົດ ແລະບໍ່ໄດ້ຢູ່ໃນການຄຸ້ມຄອງ ຂອງສະຖານທູດ ຫລືກົງສູນລາວປະຈຳປະເທດນັ້ນ ແລະຂາດສາຍພົວພັນທາງດ້ານກົດໝາຍກັບລັດ ສປປ ລາວ ເກີນສິບປີ ກໍຈະເສຍສັນຊາດລາວ.

### ມາດຕາ 21 ການໃຫ້ສັນຊາດລາວຄືນ

ບຸກຄົນທີ່ໄດ້ເສຍສັນຊາດລາວໄປແລ້ວ ອາດຈະໄດ້ສັນຊາດລາວຄືນໃໝ່ ຕາມຄຳຮ້ອງຂໍຂອງຜູ້ກ່ຽວ ແລະຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ແຫ່ງ ສປປ ລາວ.

ຜູ້ຮ້ອງຂໍເອົາສັນຊາດລາວຄືນໃໝ່ ຕ້ອງນຳເອົາຫຼັກຖານມາຢັ້ງຢືນວ່າ ຕົນເຄີຍມີສັນຊາດລາວມາກ່ອນ.

ບຸກຄົນທີ່ຖືກຖອນສັນຊາດລາວຄືນແລ້ວ ຈະບໍ່ໄດ້ຮັບສັນຊາດລາວຄືນອີກ.

## ໝວດທີ 4
## ສັນຊາດຂອງເດັກ ໃນເມື່ອມີການປ່ຽນແປງສັນຊາດຂອງພໍ່ແມ່

### ມາດຕາ 22 ສັນຊາດຂອງເດັກ

ໃນເມື່ອມີການປ່ຽນແປງສັນຊາດຂອງພໍ່ແມ່ທັງສອງຄື: ໄດ້ສັນຊາດລາວ, ປະສັນຊາດລາວ ຫລືໄດ້ສັນຊາດລາວຄືນນັ້ນ ສັນຊາດຂອງເດັກທີ່ບໍ່ເຖິງກະສຽນອາຍຸສິບແປດປີ ກໍຈະປ່ຽນແປງໄປນຳສັນຊາດຂອງພໍ່ແມ່ ເວັ້ນເສຍແຕ່ເດັກທີ່ໄດ້ສ້າງຄອບຄົວ ໂດຍຖືກຕ້ອງຕາມກົດໝາຍແລ້ວ.

### ມາດຕາ 23 ສັນຊາດຂອງເດັກ ຊຶ່ງພໍ່ ຫລື ແມ່ໄດ້ສັນຊາດລາວ

ຖ້າວ່າ ພໍ່ ຫລືແມ່ ຫາກໄດ້ສັນຊາດລາວແລ້ວ ແຕ່ອີກຜູ້ໜຶ່ງຍັງຖືສັນຊາດອື່ນຢູ່ ເດັກອາດຈະໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງພໍ່ ຫລືແມ່ ຜູ້ທີ່ໄດ້ສັນຊາດລາວນັ້ນ. ໃນກໍລະນີທີ່ມີການ

ປ່ຽນແປງສັນຊາດຂອງພໍ່ ຫລືແມ່ນັ້ນ ເດັກທີ່ເປັນພົນລະເມືອງລາວ ຊຶ່ງມີອາຍຸສິບຫ້າປີຂຶ້ນໄປ ແຕ່ບໍ່ເຖິງສິບແປດປີ ທີ່ໄດ້ສ້າງຄອບຄົວໂດຍຖືກຕ້ອງຕາມກົດໝາຍແລ້ວ ຈະເລືອກເອົາສັນຊາດຂອງຕົນ ຕາມສັນຊາດຂອງພໍ່ ຫລືແມ່ກໍໄດ້.

ຖ້າວ່າ ພໍ່ ຫລືແມ່ ຫາກໄດ້ສັນຊາດລາວແລ້ວ ແຕ່ອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ເດັກທີ່ອາໄສຢູ່ໃນດິນແດນຂອງ ສປປ ລາວ ກໍຈະຖືວ່າເປັນພົນລະເມືອງລາວ.

ຖ້າວ່າພໍ່ ຫລືແມ່ ຫາກໄດ້ສັນຊາດລາວແລ້ວ ແຕ່ອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ເດັກທີ່ອາໄສຢູ່ນອກດິນແດນຂອງ ສປປ ລາວ ອາດຈະໄດ້ສັນຊາດລາວ ຕາມຄຳຮ້ອງຂໍຂອງພໍ່ ຫລືແມ່ຜູ້ທີ່ໄດ້ສັນຊາດລາວ.

### ມາດຕາ 24 ສັນຊາດຂອງເດັກຊຶ່ງ ພໍ່ ຫລືແມ່ ໄດ້ປະສັນຊາດລາວ

ຖ້າວ່າ ພໍ່ ຫລືແມ່ ຫາກໄດ້ປະສັນຊາດລາວ ແຕ່ອີກຜູ້ໜຶ່ງຍັງຮັກສາສັນຊາດລາວ ຢູ່ເດັກຈະຕ້ອງຮັກສາສັນຊາດລາວໄວ້.

### ມາດຕາ 25 ສັນຊາດຂອງເດັກ ທີ່ເອົາມາເປັນລູກລ້ຽງ

ເດັກທີ່ເປັນພົນລະເມືອງຕ່າງປະເທດ ຫລືເດັກທີ່ບໍ່ມີສັນຊາດ ຊຶ່ງພົນລະເມືອງລາວໄດ້ເອົາມາເປັນລູກລ້ຽງນັ້ນ ກໍຈະຖືວ່າເປັນພົນລະເມືອງລາວ.

ເດັກທີ່ເປັນພົນລະເມືອງຕ່າງປະເທດ ຫລືເດັກທີ່ບໍ່ມີສັນຊາດ ຊຶ່ງພໍ່ລ້ຽງ ຫລືແມ່ລ້ຽງ ຜູ້ໜຶ່ງເປັນພົນລະເມືອງລາວ ແລະອີກຜູ້ໜຶ່ງເປັນພົນລະເມືອງຕ່າງປະເທດ ຫລືຄົນບໍ່ມີສັນຊາດໄດ້ເອົາມາເປັນລູກລ້ຽງນັ້ນ ກໍຈະຖືວ່າເປັນພົນລະເມືອງລາວ ຕາມຄຳເຫັນດີຂອງພໍ່ລ້ຽງ ແລະແມ່ລ້ຽງ.

### ມາດຕາ 26 ສັນຊາດຂອງເດັກ ຊຶ່ງເປັນພົນລະເມືອງລາວ ທີ່ເອົາໄປເປັນລູກລ້ຽງ

ເດັກທີ່ເປັນພົນລະເມືອງລາວ ໂດຍແມ່ນພໍ່ລ້ຽງ, ແມ່ລ້ຽງ ຊຶ່ງເປັນພົນລະເມືອງຕ່າງປະເທດ ຫລືຜູ້ໜຶ່ງເປັນພົນລະເມືອງລາວ ແລະອີກຜູ້ໜຶ່ງເປັນພົນລະເມືອງຕ່າງປະເທດ ໄດ້ເອົາໄປເປັນລູກລ້ຽງນັ້ນ ຈະຮັກສາສັນຊາດລາວໄວ້. ເດັກຜູ້ນັ້ນຈະປະສັນຊາດລາວ ຕາມຄຳຮ້ອງຂໍຂອງພໍ່ລ້ຽງ ແລະແມ່ລ້ຽງກໍໄດ້.

ເດັກທີ່ເປັນພົນລະເມືອງລາວ ໂດຍແມ່ນພໍ່ລ້ຽງ, ແມ່ລ້ຽງ ເປັນຄົນບໍ່ມີສັນຊາດ ຫລືຜູ້ໜຶ່ງເປັນພົນລະເມືອງລາວ ແລະອີກຜູ້ໜຶ່ງເປັນຄົນບໍ່ມີສັນຊາດ ໄດ້ເອົາໄປເປັນລູກລ້ຽງນັ້ນ ກໍຈະຮັກສາສັນຊາດລາວໄວ້.

## ໝວດທີ 5
## ການຕົກລົງ ກ່ຽວກັບສັນຊາດ ແລະການມອບສັນຊາດ

### ມາດຕາ 27 ການຕົກລົງ ກ່ຽວກັບສັນຊາດ

ການໃຫ້ສັນຊາດ, ການຖອນສັນຊາດຄືນ, ການປະສັນຊາດ ແລະການໃຫ້ສັນຊາດລາວຄືນນັ້ນ ແມ່ນຄະນະປະຈຳສະພາແຫ່ງຊາດ ແຫ່ງ ສປປ ລາວ ເປັນຜູ້ຕົກລົງ.

ການໃຫ້ສັນຊາດລາວ ໃນແຕ່ລະປີນັ້ນ ຕ້ອງມີການກຳນົດຈຳນວນທີ່ແນ່ນອນ.

**ມາດຕາ 28 ການມອບສັນຊາດ**

ການມອບສັນຊາດລາວ ແມ່ນຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເປັນຜູ້ຈັດພິທີມອບຢ່າງເປັນທາງການ ໂດຍການເຂົ້າຮ່ວມຂອງຜູ້ຕາງໜ້າອົງການປົກຄອງທ້ອງຖິ່ນ, ອົງການແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນແຂວງ, ນະຄອນ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະປະຈຳສະພາແຫ່ງຊາດ ແລະລັດຖະບານ ແຫ່ງ ສປປ ລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 30 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍສັນຊາດ ສະບັບເລກທີ 06/90/ສປສ, ລົງວັນທີ 29 ພະຈິກ 1990.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ